**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

**ກະຊວງອຸດສາຫະກໍາ ແລະ ການຄ້າ** **ເລກທີ 1066/ອຄ.ກຂອ**

ນະຄອນຫຼວງວຽງຈັນ, ວັນທີ 22 ສິງຫາ 2019

## ຂໍ້ຕົກລົງ
## ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກໍາເນີດສິນຄ້າສະເພາະ ທີ່ນໍາໃຊ້ກັບແຕ່ລະຜະລິດຕະພັນພາຍໃຕ້ເຂດການຄ້າເສລີ ອາຊຽນ - ສ. ເກົາຫຼີ ທີ່ໂອນຖ່າຍ ຈາກລະບຽບແຫຼ່ງກໍາເນີດສະເພາະຜະລິດຕະພັນ (Product Specific Rules : PSR) PSR HS 2012 ມາເປັນ PSR HS 2017

- ອີງຕາມ ດໍາລັດວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງອຸດສາຫະກໍາ ແລະ ການຄ້າ ສະບັບເລກທີ 230/ນຍ, ລົງວັນທີ 24 ກໍລະກົດ 2017;
- ອີງໃສ່ ຜົນກອງປະຊຸມຄະນະກໍາມະການຈັດຕັ້ງປະຕິບັດເຂດການຄ້າເສລີອາຊຽນ - ສ. ເກົາຫຼີ, ຄັ້ງທີ 17 ໃນລະຫວ່າງວັນທີ 12 ຫາ 14 ກຸມພາ 2019 ທີ່ ນະຄອນຫຼວງເຊອຸນ, ສ. ເກົາຫຼີ ທີ່ໄດ້ສໍາເລັດການປັບປຸງລະບຽບ ສະເພາະທີ່ນໍາໃຊ້ກັບແຕ່ລະຜະລິດຕະພັນ;
- ອີງຕາມການສະເໜີຂອງ ກົມການນໍາເຂົ້າ ແລະ ສົ່ງອອກ.

**ລັດຖະມົນຕີ ກະຊວງອຸດສາຫະກໍາ ແລະ ການຄ້າ ອອກຂໍ້ຕົກລົງ:**

**ມາດຕາ 1.** ປະກາດໃຊ້ລະບຽບແຫຼ່ງກໍາເນີດສະເພາະທີ່ນໍາໃຊ້ກັບແຕ່ລະຜະລິດຕະພັນ (Product Specific Rules: PSR) ພາຍໃຕ້ເຂດການຄ້າເສລີ ອາຊຽນ - ສ.ເກົາຫຼີ ທີ່ໂອນຖ່າຍຈາກລະບຽບແຫຼ່ງກໍາເນີດສະເພາະຜະລິດຕະພັນ PSR HS 2012 ມາເປັນ PSR HS 2017.

**ມາດຕາ 2.** ມອບໃຫ້ ກົມການນໍາເຂົ້າ ແລະ ສົ່ງອອກ ຮັບຜິດຊອບແນະນໍາ ແລະ ເຜີຍແຜ່ ວິທີຈັດຕັ້ງປະຕິບັດລະອຽດ ກ່ຽວກັບລະບຽບການດັ່ງກ່າວ ເພື່ອໃຫ້ຂໍ້ຕົກລົງສະບັບນີ້ ຖືກປະຕິບັດຢ່າງໄດ້ຮັບຜົນດີ.

**ມາດຕາ 3.** ຂໍ້ຕົກລົງສະບັບນີ້ມີຜົນບັງຄັບໃຊ້ນັບແຕ່ວັນທີ **01 ກັນຍາ 2019** ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ໃຊ້ປ່ຽນແທນ ຂໍ້ຕົກລົງ ວ່າດ້ວຍການປະກາດໃຊ້ລະບຽບແຫຼ່ງກໍາເນີດສະເພາະທີ່ນໍາໃຊ້ກັບແຕ່ລະຜະລິດຕະພັນພາຍໃຕ້ຂອບສັນຍາການຄ້າເສລີອາຊຽນ - ສ.ເກົາຫຼີ ທີ່ໂອນຖ່າຍຈາກລະບົບລະຫັດອັດຕາພາສີເອກະພາບອາຊຽນສະບັບ AHTN 2007 ມາເປັນ AHTN 2012, ສະບັບເລກທີ 0945/ອຄ.ກຂອ, ລົງວັນທີ 18 ພຶດສະພາ 2015.

**ລັດຖະມົນຕີ**

ນາງ ເຂັມມະນີ ພົນເສນາ